ທ່ານຈະໄດ້ຮັບການກວດສອບ ຫຼື ສັກຢາວັກຊີນໂລກຕັບ B ໄດ້ຢູ່ບ່ອນໃດ?

- ໃຫ້ຖາມທ່ານໝໍ ຫຼື ຄລີນິກຂອງທ່ານ ກ່ຽວກັບການກວດສອບໂລກຕັບ B. ຂໍໃຫ້ສັກຢາວັກຊີນໂລກຕັບ B ສຳຫຼັບຕົນເອງ, ລູກຂອງທ່ານ ແລະ ສະມາຊິກຄອບຄົວຂອງທ່ານ.
- ຖ້າທ່ານບໍ່ມີທ່ານໝໍ, ໃຫ້ໂທຫາພະແນກສາທາຣະນະສຸກທ້ອງຖິ່ນຂອງທ່ານ ເພື່ອຮູ້ຈັກວ່າເຂົາເຈົ້າໄດ້ຮັບການກວດສອບ ຫຼື ສັກຢາປ້ອງກັນໂລກຕັບ B ຫຼືບໍ່.

ໃຫ້ປ້ອງກັນຕົນເອງ, ລູກຂອງທ່ານ, ແລະ ສະມາຊິກຄອບຄົວຂອງທ່ານຈາກໂລກຕັບ B. ການສັກຢາວັກຊີນໂລກຕັບ B ສາມເທື່ອ ສາມາດປ້ອງກັນທ່ານຈາກພຍາດອັນຮ້າຍແຮງນີ້ກໍໄດ້.

ຖ້າທ່ານຕ້ອງການຂ້ອນລະອຽດເພີ່ມເຕີມ ກ່ຽວກັບໂລກຕັບ B ໃຫ້ໂທຫາທ່ານໝໍຂອງທ່ານ, ພະແນກສາທາຣະນະສຸກທ້ອງຖິ່ນ, ພະແນກສຸຂະພາບແມ່ແລະເດັກໄດ້ທີ່ເລກໂທ 1-800-322-2588.

Washington State Department of Health

1-800-322-2588
Information and Referral Line

A service of
Healthy Mothers, Healthy Babies
Coalition of Washington

ເພື່ອຂໍ້ເອົາປຶ້ມນ້ອຍສະບັບນີ້
ເປັນຮູບແບບອື່ນ, ກະຣຸນາໂທຫາ

1-800-525-0127

DOH PUB 348-046 7/98

ສິ່ງທີ່ຄົນເອເຊັຍ ແລະ ຊາວເກາະ ປາຊີຟິກ ຕ້ອງຮູ້ຈັກ ກ່ຽວກັບ ໂລກຕັບ B

(HEPATITIS B)

Laotian

ຄົນທີ່ເປັນເຊື້ອສາຍຈາກຄົນເອເຊັຍ ແລະ ຊາວເກາະປາຊີຟິກ ມີການສ່ຽງສູງກວ່າທີ່ຈະເປັນໂລກຕັບ B. ນີ້ກໍເພາະວ່າມັກມີ ໂລກຕັບ B ໃນບໍ່ຣິເວນເອເຊັຍຕາເວັນອອກສ່ຽງໃຕ້, ປະເທດຈີນ, ແລະ ເກາະປາຊີຟິກ.

ໂລກຕັບ B ແມ່ນຫຍັງ?

ໂລກຕັບ B ແມ່ນພະຍາດຮ້າຍແຮງທີ່ເກີດຈາກເຊື້ອວາຍຣັຊທີ່ທຳຮ້າຍຕັບ. ມັນສາມາດທຳຮ້າຍຕັບ, ເຮັດໃຫ້ເກີດໂລກມະເລງຕັບ, ແລະເຖິງແກ່ເສັຍຊີວິດໄດ້

ມີຫຼາຍຄົນທີ່ເປັນໂລກຕັບ B ບໍ່ໄດ້ຮູ້ສຶກເຈັບປ່ວຍ ແລະອາດຈະບໍ່ຮູ້ຈັກว່າໄດ້ເປັນແລ້ວ. ລູກແລະສະມາຊິກຄອບຄົວຂອງເຂົາສາມາດຕິດໂລກຕັບ B ຈາກເຂົາໄດ້ໂດຍບໍ່ຮູ້ສຶກໄຕ.

ເດັກອ່ອນ ແລະ ເດັກນ້ອຍທີ່ຕິດໂລກຕັບ B ມີການສ່ຽງສູງຫຼາຍໃນການຕິດໂລກຕລອດຊີວິດ ແລະ ມີພຍາດຕັບເໝືອນຜູ້ໃຫຍ່.

ໂລກຕັບ B ຕິດຕໍ່ກັນໄດ້ແນວໃດ?

ໂລກຕັບ B ຕິດຕໍ່ກັນຈາກຄົນນຶ່ງໄປຫາຄົນນຶ່ງໄດ້ ໂດຍທາງເລືອດທີ່ມີເຊື້ອໂລກ ຫຼື ຂອງແຫຼວຂອງຮ່າງກາຍບາງຊະນິດ. ທາງທີ່ຈະຕິດຕໍ່ກັນໄດ້ ກໍຄື:

- ◆ ໃນລະຫວ່າງຄູ່ຮ່ວມເພດ
- ◆ ຈາກແມ່ເຖິງລູກ ໃນເວລາອອກລູກ
- ◆ ໂດຍການໃຊ້ເຂັມສັກຢາຮ່ວມກັນ, ມີດແຫ, ຕຸ້ມຫູ, ຫຼື ຟອຍຕັດແຂ້ວ
- ◆ ໂດຍການຫງໍ້ງອາຫານປ້ອນລູກນ້ອຍ

ຕາມທຳມະດາໂລກຕັບ B ບໍ່ໄດ້ຕິດຕໍ່ກັນໂດຍທາງ:

- ◆ ການຈາມ
- ◆ ການໄອ
- ◆ ການໃຊ້ຖ້ວຍຈານຮ່ວມກັນ
- ◆ ການຈັບມືກັນ
- ◆ ນ້ຳນົມແມ່

ເຖິງແມ່ນວ່າທ່ານເປັນໂລກຕັບ B ຢູ່ ທ່ານຍັງສາມາດລ້ຽງລູກດ້ວຍນົມຕົນເອງໄດ້ໂດຍມີຄວາມປອດພັຍ ແຕ່ວ່າຕ້ອງເຊົາທັນທີ ຖ້າວ່າຫົວນົມມີຮອຍແຕກ ຫຼື ເປັນບາດເປື່ອຍ ໃສ່ນົມ ຂອງທ່ານ.

ຖ້າຫາກว່າທ່ານຢູ່ກັບຄົນທີ່ຕິດໂລກຕັບ B ທ່ານຕ້ອງຣະມັດຣະວັງທີ່ສຸດ. ໃຫ້ຮັບການກວດສອບໂລກຕັບ B ແລະຖ້າບໍ່ໄດ້ປ້ອງກັນເທື່ອ, ໃຫ້ສັກຢາປ້ອງກັນໂລກຕັບ B ສາມເທື່ອ ເພື່ອປ້ອງກັນຕົວ.

ໃຜຕ້ອງການສັກຢາວັກຊີນໂລກຕັບ B?

- ◆ ຖ້າທ່ານເປັນເຊື້ອສາຍຊາວເອເຊັຍ ຫຼື ຊາວເກາະປາຊີຟິກ, ການໃຫ້ທ່ານແລະຄອບຄົວຂອງທ່ານ ຮັບການກວດສອບໂລກຕັບ B ສຳຄັນຫຼາຍ. ຖ້າທ່ານບໍ່ໄດ້ປ້ອງກັນຕົວເທື່ອ, ການສັກຢາວັກຊີນໂລກຕັບ B ສາມເທື່ອ ຈະປ້ອງກັນທ່ານໄດ້.
- ◆ ເດັກອ່ອນທີ່ເກີດຢູ່ສະຫະຣັດທຸກຄົນຕ້ອງໄດ້ສັກຢາວັກຊີນໂລກຕັບ B ສາມເທື່ອ.
- ◆ ຖ້າລູກຂອງທ່ານເກີດຢູ່ປະເທດອື່ນ ຫຼື ທ່ານບໍ່ແນ່ໃຈວ່າເຂົາເຈົ້າໄດ້ຮັບການສັກຢາວັກຊີນຫຼືຍັງ, ໃຫ້ຕິດຕໍ່ກັບທ່ານໝໍ ຫຼື ຄລີນິກຂອງທ່ານ ເພື່ອແນ່ໃຈວ່າລູກຂອງທ່ານໄດ້ຮັບການປ້ອງກັນເຕັມສ່ວນ.

Washington State Department of Health

Dear Colleague,

The Washington State Department of Health (DOH) is pleased to provide camera-ready art for printing this educational material. To ensure that the original quality of the piece is maintained, please read and follow the instructions below and the specifications included for professional printing.

- **Use the latest version**. DOH materials are developed using the most current information available, are checked for clinical accuracy, and are field tested with the intended audience to ensure they are clear and readable. DOH programs make periodic revisions to educational materials, so please check this web site to be sure you have the latest version. DOH assumes no responsibility for the use of this material or for any errors or omissions.

- **Do not alter**. We are providing this artwork with the understanding that it will be printed without alterations and copies will be free to the public. Do not edit the text or use illustrations or photographs for other purposes without first contacting us. Please do not alter or remove the DOH logo, publication number or revision date. If you want to use a part of this publication for other purposes, contact the Office of Health Promotion first.

- **For quality reproduction**: Low resolution PDF files are intended for black and white or color desktop printers. They work best if you are making only one or two copies. High resolution PDF files are intended for reproducing large quantities and are set up for use by professional offset print shops. The high resolution files also include detailed printing specifications. Please match them as closely as possible and insist on the best possible quality for all reproductions.

If you have questions, contact:
Office of Health Promotion
P.O. Box 47833 Olympia, WA 98504-7833
(360) 236-3736

Sincerely,
Health Education Resource Exchange Web Team

PRINTING SPECIFICATIONS

Title:	**What Asians and Pacific Islanders Need to Know About Hepatitis B**
Size:	11 x 8.5
Paper stock:	80# book Fortune Matte White (Coated/Non-Gloss)
Ink color:	Pantone 320 and Black
Special instructions:	2-sided printing with bleeds. Finished job folds to 3.6875 x 8.5
DOH Pub #:	348-046 Laotian